*Journal of Science and Teacher Education (JLSTE), 1*(2), 426-435

# ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານໃນແບບຮຽນວິຊາພາສາລາວຊັ້ນປະຖົມສຶກສາ

*ແຫວນທອງ ນັນທະວົງ*; ບົວລີ ປະພາພັນ ***

** ພາກວິຊາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ*

***ສູນຄົ້ນຄວ້າພາສາລາວ ມະຫາວິທະຍາໄລແຫ່ງຊາດ*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າທາງຄຸນນະພາບ ມີຈຸດປະສົງເພື່ອວິເຄາະລະດັບຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານໃນແບບຮຽນວິຊາພາສາລາວ ຊັ້ນປະຖົມສຶກສາ (ປ.3-ປ.5) ສະບັບປັບປຸງໃໝ່. ກຸ່ມຕົວຢ່າງທີ່ໃຊ້ໃນການວິເຄາະປະກອບດ້ວຍບົດອ່ານ 28 ບົດ ແລະ ຄຳຖາມທ້າຍບົດ 98 ຂໍ້ ທີ່ຄັດເລືອກແບບເຈາະຈົງ (Purposive Sampling) ຈາກປຶ້ມແບບຮຽນ ປ.3 (2021), ປ.4 (2022), ແລະ ປ.5 (2023). ເຄື່ອງມືໃນການຄົ້ນຄວ້າແມ່ນແບບບັນທຶກການວິເຄາະທີ່ຜູ້ວິໄຈສ້າງຂຶ້ນໂດຍອີງໃສ່ກອບທິດສະດີຫຼັກຄື: ທິດສະດີລຳດັບຂັ້ນການຮຽນຮູ້ຂອງ ບລູມ (Bloom’s Taxonomy) ແລະ ທິດສະດີຄວາມສຳພັນລະຫວ່າງຄຳຖາມ-ຄຳຕອບ (QAR). ຜົນການວິເຄາະຖືກປະເມີນໂດຍໃຊ້ເກນ 3 ລະດັບ (ສອດຄ່ອງຫຼາຍ, ປານກາງ, ໜ້ອຍ/ບໍ່ສອດຄ່ອງ) ໂດຍແຍກເປັນແຕ່ລະຊັ້ນພົບວ່າ ຊັ້ນປະຖົມສຶກສາປີທີ 3 ມີຄວາມ ສອດຄ່ອງຢູ່ໃນລະດັບສູງຫຼາຍ 52 ຂໍ້ (89.7%), ສອດຄ່ອງລະດັບປານກາງ 6 ຂໍ້ (10.3%). ຊັ້ນປະຖົມສຶກສາປີທີ 4 ພົບວ່າຄວາມສອດຄ່ອງສ່ວນໃຫຍ່ຢູ່ໃນລະດັບດີ, ປະກອບມີຄຳຖາມທີ່ສອດຄ່ອງຫຼາຍ 12 ຂໍ້ (70.6%), ສອດຄ່ອງປານກາງ 3 ຂໍ້ (17.6%), ແລະ ບໍ່ສອດຄ່ອງ 2 ຂໍ້ (11.8%). ສຳລັບຊັ້ນປະຖົມສຶກສາປີທີ 5, ຈາກຄຳຖາມທັງໝົດ 23 ຂໍ້, ພົບວ່າຄວາມສອດຄ່ອງຢູ່ໃນລະດັບຫຼາຍເຖິງ 21 ຂໍ້ (91.3%) ແລະ ບໍ່ສອດຄ່ອງ 2 ຂໍ້ (8.7%). ກໍລະນີເບິ່ງໂດຍລວມຈາກຄຳຖາມທັງໝົດ 98 ຂໍ້ ພົບວ່າຄວາມສອດຄ່ອງຍັງຄົງຢູ່ໃນລະດັບສູງຫຼາຍ, ໂດຍມີຄຳຖາມທີ່ສອດຄ່ອງຫຼາຍຈຳນວນ 85 ຂໍ້(86.7%), ສອດຄ່ອງປານກາງ 9 ຂໍ້ (9.2%) ແລະ ມີພຽງ 4 ຂໍ້ (4.1%) ທີ່ບໍ່ສອດຄ່ອງ. ຄຳຖາມທີ່ມີຄວາມສອດຄ່ອງສູງມັກຈະຖາມກ່ຽວກັບໃຈຄວາມຫຼັກ, ເຫດຜົນສຳຄັນ, ແລະ ຂໍ້ຄິດຂອງບົດ. ສ່ວນຂໍ້ທີ່ບໍ່ສອດຄ່ອງມີສາເຫດຫຼັກມາຈາກບັນຫາດ້ານເຕັກນິກການອອກແບບຄຳຖາມ. ແບບຮຽນຊຸດນີ້ເປັນເຄື່ອງມືທີ່ມີປະສິດທິພາບສູງໃນການວັດປະເມີນຄວາມເຂົ້າໃຈ ແລະ ສົ່ງເສີມການຄິດຂອງນັກໂດຍຄຳຖາມທ້າຍບົດສ່ວນຫຼາຍມີຄວາມສອດຄ່ອງກັບເນື້ອໃນ ແລະ ຈຸດປະສົງຂອງບົດອ່ານຢ່າງເລິກເຊິ່ງ.

**ຄຳສຳຄັນ:** ຄວາມສອດຄ່ອງ, ຄຳຖາມທ້າຍບົດ, ການອ່ານຈັບໃຈຄວາມ, ແບບຮຽນພາສາລາວ, ຊັ້ນປະຖົມສຶກສາ.

---

***ຕິດຕໍ່ພົວພັນ:** ແຫວນທອງ ນັນທະວົງ; ເບີໂທ 020 58565757; ອີເມວ: v.nanthavong@nuol.edu.la*

# Evaluating the Alignment Between Reading Passages and End-of-Chapter Questions in the Lao Language Textbook for Primary Education

*Vandthong NANTHAVONG*, Bualy PAPHAPHAN*[1]

[*] *Department of Lao Language and Literature, Faculty of Education, National University of Laos*
[1] *Lao Language Research Center, National University of Laos*

## Abstract

This qualitative study aimed to analyze the degree of alignment between end-of-chapter questions and the content of reading passages in the newly revised Lao Language textbooks for primary school (Grades 3–5). The sample, selected through purposive sampling, consisted of 28 reading passages and 98 end-of-chapter questions from the Grade 3 (2021), Grade 4 (2022), and Grade 5 (2023) textbooks. The research instrument was an analysis protocol based on Bloom's Taxonomy and the Question–Answer Relationship (QAR) framework. The findings show that, for grade 3, out of 58 questions, 52 (89.7%) showed high alignment, 6 (10.3%) showed moderate alignment, and none were misaligned. For grade 4, out of 17 questions, 12 (70.6%) showed high alignment, 3 (17.6%) showed moderate alignment, and 2 (11.8%) were misaligned. For grade 5, out of 23 questions, 21 (91.3%) showed high alignment, none showed moderate alignment, and 2 (8.7%) were misaligned. Overall, across all three grades, out of 98 questions, 85 (86.7%) demonstrated high alignment, 9 (9.2%) showed moderate alignment, and only 4 (4.1%) were misaligned. Highly aligned questions typically emphasized main ideas and key reasons, whereas misalignments were primarily due to technical flaws in question design. This newly revised Lao Language textbook series demonstrates strong alignment between reading passages and end-of-chapter questions, making it an effective tool for assessing comprehension and fostering students' thinking skills.

***Key words:*** *Alignment, End-of-chapter questions, Reading comprehension, Lao language textbooks, Primary education.*

**Correspondence: vandthong NANTHAVONG; Tel: 020 58565757; Email: v.nanthavong@nuol.edu.la*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການພັດທະນາຊັບພະຍາກອນມະນຸດເປັນກຸນແຈສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ກະຊວງສຶກສາທິການ ແລະ ກິລາ ໄດ້ວາງວິໄສທັດໃນການສ້າງຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີທັກສະ ແລະ ຄວາມສາມາດໃນການນຳໃຊ້ວິທະຍາສາດເຕັກນິກທີ່ທັນສະໄໝ (ກະຊວງສຶກສາທິການ ແລະ ກິລາ, 2015). ໃນຂະບວນການດັ່ງກ່າວ, ພາສາລາວມີບົດບາດເປັນເຄື່ອງມືພື້ນຖານທີ່ຂາດບໍ່ໄດ້ໃນການຄົ້ນຄິດ, ສື່ສານ ແລະ ສິ່ງທອດຄວາມຮູ້ (ຄຳສອນ ທອງມີໄຊ ພ້ອມດ້ວຍຄະນະ, 2016). ດັ່ງນັ້ນ, ການພັດທະນາທັກສະການອ່ານຈັບໃຈຄວາມ (Reading Comprehension) ຈຶ່ງເປັນຫົວໃຈສຳຄັນຂອງການຮຽນຮູ້ໃນຊັ້ນປະຖົມສຶກສາ.

ຄວາມເຂົ້າໃຈໃນການອ່ານ (Reading Comprehension) ເປັນຂະບວນການທີ່ຜູ້ອ່ານສ້າງຄວາມໝາຍໂດຍການເຊື່ອມໂຍງຂໍ້ມູນຈາກບົດອ່ານເຂົ້າກັບຄວາມຮູ້ ແລະ ປະສົບການເດີມຂອງຕົນເອງ (Tennent, 2015). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ໄດ້ກຳນົດເປັນບູລິມະສິດໃຫ້ຮັບປະກັນວ່ານັກຮຽນຊັ້ນປະຖົມທຸກຄົນສາມາດອ່ານອອກຂຽນໄດ້ ແລະ ຄິດໄລ່ເລກເປັນ (ກະຊວງສຶກສາທິການ ແລະ ກິລາ, 2021). ເຄື່ອງມືສຳຄັນຢ່າງໜຶ່ງທີ່ຖືກນຳໃຊ້ຢ່າງແພ່ຫຼາຍໃນການວັດປະເມີນ ແລະ ກະຕຸ້ນຄວາມເຂົ້າໃຈໃນການອ່ານຂອງນັກຮຽນກໍຄື "ຄຳຖາມທ້າຍບົດອ່ານ" ໃນປຶ້ມແບບຮຽນ.

ຄຳຖາມທ້າຍບົດທີ່ມີຄຸນນະພາບບໍ່ພຽງແຕ່ຊ່ວຍປະເມີນຄວາມຈື່ຈຳ, ແຕ່ຍັງສາມາດກະຕຸ້ນໃຫ້ຜູ້ຮຽນເກີດການຄິດໃນລະດັບທີ່ຊັບຊ້ອນຂຶ້ນ. ເພື່ອໃຫ້ຄຳຖາມສາມາດເຮັດໜ້າທີ່ນີ້ໄດ້ຢ່າງມີປະສິດທິພາບ, ມັນຈຳເປັນຕ້ອງມີ **ຄວາມສອດຄ່ອງ (Consistency)** ກັບເນື້ອໃນ ແລະ ຈຸດປະສົງຂອງບົດອ່ານ. ຄວາມສອດຄ່ອງໃນທີ່ນີ້ໝາຍເຖິງການທີ່ຄຳຖາມຖາມໃນສິ່ງທີ່ບົດອ່ານໄດ້ສອນ, ບໍ່ວ່າຈະເປັນການຖາມຂໍ້ມູນໂດຍກົງ, ການຖາມເພື່ອໃຫ້ຕີຄວາມ ຫຼື ການຖາມເພື່ອໃຫ້ວິເຄາະສັງເຄາະ. ຫາກຄຳຖາມບໍ່ສອດຄ່ອງກັບເນື້ອໃນ, ເຊັ່ນ ຖາມໃນສິ່ງທີ່ບໍ່ມີໃນບົດ ຫຼື ຖາມລາຍລະອຽດທີ່ບໍ່ສຳຄັນ, ມັນອາດເຮັດໃຫ້ການວັດຜົນຄາດເຄື່ອນ ແລະ ບໍ່ສາມາດສົ່ງເສີມການຮຽນຮູ້ໄດ້ຢ່າງເຕັມທີ່.

ຈາກປະສົບການໃນຖານະຜູ້ວິໄຈທີ່ເປັນຄູສອນ ແລະ ຈາກການສຳຫຼວດເບື້ອງຕົ້ນໃນການນຳໃຊ້ແບບຮຽນ, ໄດ້ພົບເຫັນປະເດັນທີ່ໜ້າສົນໃຈວ່າ ຄຳຖາມທ້າຍບົດບາງຄັ້ງອາດຈະຍັງບໍ່ສອດຄ່ອງກັບເນື້ອໃນຢ່າງສົມບູນ, ເຊິ່ງກາຍເປັນບັນຫາທີ່ພາໃຫ້ເກີດຄຳຖາມວ່າເຄື່ອງມືວັດຜົນທີ່ສຳຄັນນີ້ມີຄຸນນະພາບ ແລະ ປະສິດທິພາບພຽງໃດ. ພ້ອມດຽວກັນນັ້ນ, ຈາກການທົບທວນເອກະສານວິໄຈທີ່ກ່ຽວຂ້ອງໃນ ສປປ ລາວ, ຍັງບໍ່ພົບເຫັນການສຶກສາທີ່ວິເຄາະ "ຄວາມສອດຄ່ອງ" ລະຫວ່າງຄາຖາມ ແລະ ເນື້ອໃນໃນແບບຮຽນວິຊາພາສາລາວຊັ້ນປະຖົມຢ່າງເປັນລະບົບ. ດ້ວຍເຫດນີ້, ການຄົ້ນຄວ້າຄັ້ງນີ້ຈຶ່ງມີຄວາມຈຳເປັນ. ເຫດຜົນທີ່ຕ້ອງສຶກສາສະເພາະຊັ້ນ ປ.3-ປ.5 ແມ່ນຍ້ອນວ່າຊ່ວງຊັ້ນຮຽນນີ້ເປັນຊ່ວງເວລາສຳຄັນທີ່ສຸດທີ່ນັກຮຽນກຳລັງຂ້າມຜ່ານຈາກ "ການຮຽນເພື່ອອ່ານ" (Learning to read) ໄປສູ່ "ການອ່ານເພື່ອຮຽນຮູ້" (Reading to learn), ເຊິ່ງທັກສະການຄິດວິເຄາະ ແລະ ການຈັບໃຈຄວາມກາຍເປັນສິ່ງຈຳເປັນຢ່າງຍິ່ງ. ສ່ວນເຫດຜົນທີ່ຕ້ອງວິເຄາະຕາມແນວຄິດຂອງ Bloom's Taxonomy ແລະ QAR ແມ່ນຍ້ອນວ່າທັງສອງທິດສະດີນີ້ເປັນເຄື່ອງມືມາດຕະຖານທີ່ໄດ້ຮັບການຍອມຮັບໃນລະດັບສາກົນ: Bloom's Taxonomy ຊ່ວຍໃຫ້ສາມາດຈຳແນກລະດັບຄວາມຄິດຂອງຄຳຖາມໄດ້ຢ່າງເປັນລະບົບຈາກລະດັບຕ່ຳຫາສູງ, ໃນຂະນະທີ່ QAR ຊ່ວຍໃຫ້ສາມາດກວດສອບໄດ້ຢ່າງຊັດເຈນວ່າຄຳຕອບຂອງຄຳຖາມນັ້ນມີທີ່ມາຈາກບົດອ່ານໂດຍກົງຫຼື ຈາກການຄິດຂອງນັກຮຽນ, ເຊິ່ງເປັນການວັດປະເມີນຄວາມສອດຄ່ອງໂດຍກົງ. ດັ່ງນັ້ນ, ການສຶກສາຄັ້ງນີ້ຈຶ່ງມີຄວາມຈຳເປັນ ເພື່ອສ້າງຄວາມເຂົ້າໃຈຕໍ່ສະພາບຄວາມເປັນຈິງ, ປະເມີນຄຸນນະພາບຂອງເຄື່ອງມືການຮຽນ-ການສອນທີ່ສຳຄັນນີ້ ແລະ ຊອກຫາຂໍ້ມູນພື້ນຖານເພື່ອເປັນແນວທາງໃນການພັດທະນາປັບປຸງແບບຮຽນໃຫ້ມີປະສິດທິພາບສູງສຸດໃນອະນາຄົດ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1.ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.3 ຢູ່ໃນລະດັບໃດ?

2.ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.4 ຢູ່ໃນລະດັບໃດ?

3.ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.5 ຢູ່ໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1.ເພື່ອວິເຄາະຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.3

2.ເພື່ອວິເຄາະຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.4

3.ເພື່ອວິເຄາະຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານວິຊາພາສາລາວຊັ້ນປະຖົມສຶກສາຂັ້ນ ປ.5

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການຄົ້ນຄວ້າເພື່ອວິເຄາະຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານ, ຜູ້ຄົ້ນຄວ້າໄດ້ຮອບຮອມບັນດາທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງໂດຍກົງ ເພື່ອນຳໃຊ້ເປັນກອບແນວຄິດໃນການວິເຄາະ.

### *2.1 ທົບທວນແນວຄິດທິດສະດີທີ່ກ່ຽວຂ້ອງ*

#### *2.1.1 ແນວຄິດທິດສະດີກ່ຽວກັບການຕັ້ງຄຳຖາມເພື່ອຄວາມເຂົ້າໃຈໃນການອ່ານ*

ການໃຊ້ຄຳຖາມເປັນເຕັກນິກສຳຄັນໃນການສົ່ງເສີມຄວາມເຂົ້າໃຈໃນການອ່ານ,ດາລາ ກັນລະຍາ ພ້ອມຄະນະ (2007) ໄດ້ຊີ້ໃຫ້ເຫັນວ່າ ຄຳຖາມທີ່ດີບໍ່ພຽງແຕ່ທົດສອບຄວາມຈື່ຈຳ, ແຕ່ຍັງເປັນການເຝິກຝົນສະຕິປັນຍາ, ໄຫວພິບ, ແລະ ການໃຊ້ພາສາ. ການຕັ້ງຄຳຖາມຊ່ວຍໃຫ້ນັກຮຽນ:

**- ຈັບໃຈຄວາມສຳຄັນ:** ຄຳຖາມເຊັ່ນ "ບົດນີ້ເວົ້າກ່ຽວກັບຫຍັງ?" ຊ່ວຍໃຫ້ນັກຮຽນຕ້ອງສະຫຼຸບແນວຄິດຫຼັກຂອງເລື່ອງ.

**-ເຂົ້າໃຈເຫດ ແລະ ຜົນ:** ຄຳຖາມທີ່ໃຊ້ຄຳວ່າ "ຍ້ອນຫຍັງ" ຫຼື "ເປັນຫຍັງ" ກະຕຸ້ນໃຫ້ນັກຮຽນຄົ້ນຫາຄວາມສຳພັນເຊີງສາເຫດໃນບົດອ່ານ.

- **ວິເຄາະ ແລະ ຕີຄວາມ:** ຄຳຖາມບາງປະເພດຮຽກຮ້ອງໃຫ້ນັກຮຽນຄິດເກີນກວ່າສິ່ງທີ່ຂຽນໄວ້ໃນບົດໂດຍກົງ, ໂດຍຕ້ອງອາໄສການຕີຄວາມໝາຍແຝງ.

#### *2.1.2 ທິດສະດີລຳດັບຂັ້ນການຮຽນຮູ້ຂອງ ບລູມ (Bloom's Taxonomy)*

ເພື່ອວິເຄາະຄຸນນະພາບຂອງຄຳຖາມຢ່າງເປັນລະບົບ, ທິດສະດີຂອງ ບລູມ (ສະບັບປັບປຸງໂດຍ Anderson & Krathwohl, 2001) ເປັນເຄື່ອງມືທີ່ໄດ້ຮັບການຍອມຮັບໃນລະດັບສາກົນ. ທິດສະດີນີ້ຈຳແນກລະດັບຄວາມສາມາດທາງສະຕິປັນຍາອອກເປັນ 6 ລະດັບ, ຈາກຂັ້ນພື້ນຖານໄປຫາຂັ້ນສູງ. ການວິເຄາະຄຳຖາມຕາມຂອບເຂດນີ້ຊ່ວຍໃຫ້ເຫັນວ່າຄຳຖາມນັ້ນກຳລັງວັດປະເມີນ ແລະ ສົ່ງເສີມການຄິດໃນລະດັບໃດ.

- ລະດັບ 1: ການຈື່ຈຳ (Remembering): ເປັນການລະນຶກເຖິງຂໍ້ມູນ, ຂໍ້ເທັດຈິງ, ຫຼື ລາຍລະອຽດທີ່ປາກົດໃນບົດອ່ານໂດຍກົງ. ຄຳຖາມມັກຈະໃຊ້ຄຳວ່າ: ໃຜ, ແມ່ນຫຍັງ, ຢູ່ໃສ, ເມື່ອໃດ, ຈົ່ງບອກ. ເປັນລະດັບພື້ນຖານທີ່ສຸດຂອງຄວາມເຂົ້າໃຈ.

- ລະດັບ 2: ການເຂົ້າໃຈ (Understanding): ເປັນການອະທິບາຍ, ແປຄວາມ, ຫຼື ສະຫຼຸບແນວຄິດຈາກບົດອ່ານດ້ວຍສຳນວນຂອງຕົນເອງ. ສະແດງໃຫ້ເຫັນວ່ານັກຮຽນບໍ່ພຽງແຕ່ຈື່ໄດ້ແຕ່ສາມາດຈັດລະບຽບຄວາມຄິດໄດ້. ຄຳຖາມມັກຈະໃຊ້ຄຳວ່າ: ຈົ່ງອະທິບາຍ, ຍ້ອນຫຍັງ, ເປັນຫຍັງ, ເຈົ້າເຂົ້າໃຈວ່າແນວໃດ.

- ລະດັບ 3: ການນຳໃຊ້ (Applying): ເປັນການນຳເອົາຄວາມຮູ້ຫຼືຫຼັກການທີ່ໄດ້ຈາກເລື່ອງໄປໃຊ້ແກ້ບັນຫາໃນສະຖານະການໃໝ່. ຄຳຖາມມັກຈະຖາມວ່າ: ຖ້າເຈົ້າເປັນ..., ເຈົ້າຈະເຮັດແນວໃດ?, ເຮົາສາມາດນຳບົດຮຽນນີ້ໄປໃຊ້...ແນວໃດ?. ເປັນຂົວຕໍ່ລະຫວ່າງການຮຽນໃນຫ້ອງກັບຊີວິດຕົວຈິງ.

- ລະດັບ 4: ການວິເຄາະ (Analyzing): ເປັນການຈຳແນກອົງປະກອບ, ໂຄງສ້າງ, ຫຼື ຄວາມສຳພັນຕ່າງໆໃນບົດອ່ານ. ຮຽກຮ້ອງໃຫ້ນັກຮຽນເບິ່ງເລິກລົງໄປໃນໂຄງສ້າງຂອງບົດ. ຄຳຖາມມັກຈະໃຊ້ຄຳວ່າ: ຈົ່ງປຽບທຽບ, ບົດນີ້ມີສ່ວນປະກອບຫຍັງແດ່?, ຄວາມສຳພັນລະຫວ່າງ...ແມ່ນຫຍັງ?.

- ລະດັບ 5: ການປະເມີນຄ່າ (Evaluating): ເປັນການຕັດສິນຄຸນຄ່າ, ຄວາມຖືກຕ້ອງ, ຫຼື ຄວາມເໝາະສົມຂອງຂໍ້ມູນ ຫຼື ການກະທຳໃນບົດອ່ານ, ໂດຍຕ້ອງມີເກນຫຼືເຫດຜົນປະກອບ. ເປັນການຄິດຂັ້ນສູງທີ່ຮຽກຮ້ອງການຕັດສິນໃຈ. ຄຳຖາມມັກຈະຖາມວ່າ: ການກະທຳຂອງ...ຖືກຕ້ອງ ຫຼື ບໍ່? ຍ້ອນຫຍັງ?, ເຈົ້າເຫັນດີນຳ...ຫຼືບໍ່?.

- ລະດັບ 6: ການສ້າງສັນ (Creating): ເປັນການຮອບຮອມອົງປະກອບຕ່າງໆ ເພື່ອສ້າງສິ່ງໃໝ່, ຜົນງານໃໝ່, ຫຼື ແນວທາງໃໝ່ທີ່ບໍ່ເຄີຍມີມາກ່ອນ. ເປັນລະດັບສູງສຸດຂອງການຄິດ. ຄຳຖາມມັກຈະຖາມວ່າ: ຈົ່ງຄິດຫາຕອນຈົບແບບໃໝ່, ຈົ່ງແຕ່ງກາບກອນຕໍ່ຈາກບົດນີ້.

#### *2.1.3 ທິດສະດີຄວາມສຳພັນລະຫວ່າງຄຳຖາມ-ຄຳຕອບ (Question-Answer Relationship - QAR)*

ທິດສະດີ QAR, ພັດທະນາໂດຍ Raphael (1982, 1986), ເປັນກອບແນວຄິດທີ່ຊ່ວຍໃຫ້ນັກຮຽນ ແລະ ຜູ້ວິເຄາະເຂົ້າໃຈ "ແຫຼ່ງທີ່ມາ" ຂອງຄຳຕອບ. ທິດສະດີນີ້ເປັນເຄື່ອງມືຫຼັກໃນການກວດສອບຄວາມສອດຄ່ອງໂດຍກົງ, ໂດຍຊ່ວຍໃຫ້ເຮົາເຫັນວ່າ ຄຳຖາມນັ້ນຮຽກຮ້ອງໃຫ້ນັກຮຽນຊອກຫາຄຳຕອບຈາກໃນບົດອ່ານ ຫຼື ຕ້ອງໃຊ້ຄວາມຄິດຂອງຕົນເອງມາປະກອບ. 1) ຄຳຖາມທີ່ມີຄຳຕອບໃນປຶ້ມ (In the Book): ຄຳຕອບມີຢູ່ໃນບົດອ່ານໂດຍກົງ, ວັດແທກຄວາມເຂົ້າໃຈເນື້ອຫາ.

- ຢູ່ໃນບົດເລີຍ (Right There): ຄຳຕອບຢູ່ໃນປະໂຫຍກດຽວ ແລະ ຊັດເຈນ. ຖາມກ່ຽວກັບ ໃຜ, ຫຍັງ, ຢູ່ໃສ, ເມື່ອໃດ.

- ຄິດ ແລະ ຊອກຫາ (Think and Search): ຄຳຕອບມີຢູ່ໃນບົດ ແຕ່ຕ້ອງຊອກຈາກຫຼາຍໆບ່ອນມາປະກອບກັນ ເຊັ່ນ: ການສະຫຼຸບໃຈຄວາມ, ການລຽງລຳດັບເຫດການ.

2) ຄຳຖາມທີ່ມີຄຳຕອບໃນຫົວຂອງຂ້ອຍ (In My Head): ຕ້ອງໃຊ້ຄວາມຮູ້ເດີມ ແລະ ປະສົບການມາປະກອບກັບຂໍ້ມູນໃນບົດ.

- ຜູ້ຂຽນ ແລະ ເຈົ້າ (Author and You): ຄຳຕອບບໍ່ມີບອກໄວ້ໂດຍກົງ. ຕ້ອງເອົາຂໍ້ມູນຈາກບົດມາປະສົມກັບຄວາມຄິດຂອງຕົນເອງເພື່ອຕີຄວາມ ເຊັ່ນ: ການຄາດເດົາຄວາມຮູ້ສຶກຕົວລະຄອນ ຫຼື ຈຸດປະສົງຂອງຜູ້ຂຽນ.

- ດ້ວຍຕົວຂ້ອຍເອງ (On My Own): ຄຳຕອບມາຈາກປະສົບການ ແລະ ຄວາມຄິດຂອງຜູ້ອ່ານເອງທັງໝົດ. ຄຳຖາມພຽງແຕ່ກ່ຽວຂ້ອງກັບຫົວຂໍ້ຂອງບົດອ່ານເທົ່ານັ້ນ.

*2.2 ທົບທວນບົດຄົ້ນຄວ້າທີ່ກ່ຽວຂ້ອງ*

ຜ່ານການທົບທວນ, ພົບເຫັນບົດຄົ້ນຄວ້າທັງໃນ ແລະ ຕ່າງປະເທດ ທີ່ສະໜັບສະໜູນຄວາມສຳຄັນຂອງການວິເຄາະຄຳຖາມໃນແບບຮຽນ ເຊິ່ງສາມາດນຳມາເປັນພື້ນຖານໃຫ້ແກ່ການວິໄຈຄັ້ງນີ້:

Harris & Baker (2011) ໄດ້ສຶກສາບົດບາດຂອງການຕັ້ງຄຳຖາມໃນການອອກແບບປຶ້ມແບບຮຽນ ແລະ ໄດ້ເນັ້ນວ່າ "ຄວາມສອດຄ່ອງ" ລະຫວ່າງເນື້ອໃນບົດອ່ານ ແລະ ຄາຖາມ ເປັນປັດໄຈສຳຄັນທີ່ສຸດຕໍ່ປະສິດທິພາບຂອງປຶ້ມແບບຮຽນໃນການສົ່ງເສີມທັກສະການຄິດຂັ້ນສູງ. ງານວິໄຈນີ້ຢືນຢັນວ່າຫົວຂໍ້ການຄົ້ນຄວ້າ ມີຄວາມສຳຄັນໃນລະດັບສາກົນ.

Frase (1968) ໄດ້ສຶກສາຜົນຂອງການຕັ້ງຄຳຖາມ ແລະ ພົບວ່າປະສິດທິພາບຂອງຄຳຖາມຂຶ້ນຢູ່ກັບການຈັດວາງເນື້ອໃນຂອງເລື່ອງ. ນີ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຄຳຖາມຕ້ອງ "ສອດຄ່ອງ" ກັບຈຸດທີ່ເນື້ອໃນຕ້ອງການເນັ້ນ.

ວາຣຸນີ ຈັນທະຣະພາ (2558) ໄດ້ວິເຄາະຄຳຖາມໃນແບບຮຽນພາສາໄທຊັ້ນປະຖົມ ພົບວ່າຄຳຖາມສ່ວນໃຫຍ່ຍັງຢູ່ໃນລະດັບຄວາມຈື່ຈຳ ແລະ ສະເໜີແນະໃຫ້ມີການເພີ່ມສັດສ່ວນຂອງຄຳຖາມທີ່ສົ່ງເສີມການຄິດວິເຄາະ ແລະ ການປະເມີນຄ່າໃຫ້ຫຼາຍຂຶ້ນ. ງານວິໄຈນີ້ເປັນຕົວຢ່າງທີ່ດີໃນການນຳໃຊ້ທິດສະດີຂອງບລູມໃນການປະເມີນແບບຮຽນໃນພາກພື້ນ.

ສຸພັດຕາ ທົງໄຊ (2547) ໄດ້ສຶກສາປະໂຫຍກຄຳຖາມໃນຂໍ້ສອບວິຊາພາສາໄທ ແລະ ໄດ້ຈຳແນກປະເພດຄຳຖາມຕາມທິດສະດີຂອງບລູມ, ເຊິ່ງເປັນການຢືນຢັນວ່າກອບທິດສະດີນີ້ສາມາດນຳມາໃຊ້ວິເຄາະຄຳຖາມໃນແບບຮຽນໄດ້ຢ່າງມີປະສິດທິພາບ.

Kinniburgh & Prew (2010) ໄດ້ສຶກສາການນຳໃຊ້ທິດສະດີ QAR ໃນຊັ້ນປະຖົມ ແລະ ພົບວ່າມັນເປັນການວາງຮາກຖານທີ່ສຳຄັນໃຫ້ແກ່ຄວາມເຂົ້າໃຈໃນການອ່ານ. ບົດວິໄຈນີ້ສະໜັບສະໜູນການນຳໃຊ້ QAR ເປັນເຄື່ອງມືຫຼັກໃນການວິເຄາະຄວາມສຳພັນລະຫວ່າງຄຳຖາມ ແລະ ບົດອ່ານໃນການຄົ້ນຄວ້າຄັ້ງນີ້.

ຈາກການທົບທວນບົດຄົ້ນຄວ້າທີ່ກ່ຽວຂ້ອງທັງໝົດ, ສາມາດເຫັນໄດ້ວ່າການວິເຄາະຄຳຖາມທ້າຍບົດໂດຍອີງໃສ່ກອບທິດສະດີທີ່ເປັນລະບົບ ເປັນສິ່ງທີ່ຈຳເປັນ ແລະ ເປັນທີ່ຍອມຮັບໃນວົງການວິຊາການ ເພື່ອປະເມີນ ແລະ ພັດທະນາຄຸນນະພາບຂອງແບບຮຽນ.

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນການວິໄຈເອກະສານທາງຄຸນນະພາບ (Qualitative Document Analysis) ເພື່ອວິເຄາະຄວາມສອດຄ່ອງຂອງຄຳຖາມທ້າຍບົດກັບເນື້ອໃນບົດອ່ານ. ໂດຍມີລາຍລະອຽດຂອງວິທີການຄົ້ນຄວ້າດັ່ງຕໍ່ໄປນີ້:

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

- ປະຊາກອນ: ເນື້ອໃນທັງໝົດ (ລວມທັງບົດອ່ານ ແລະ ຄຳຖາມທ້າຍບົດ) ທີ່ປາກົດຢູ່ໃນປຶ້ມແບບຮຽນວິຊາພາສາລາວ ຊັ້ນປະຖົມສຶກສາ ຫຼັກສູດປັບປຸງໃໝ່ ຈຳນວນ 3 ຫົວ ຄື:ປຶ້ມແບບຮຽນວິຊາພາສາລາວ ຊັ້ນ ປ.3 (ສະບັບປີ 2021),ປຶ້ມແບບຮຽນວິຊາພາສາລາວ ຊັ້ນ ປ.4 (ສະບັບປີ 2022), ປຶ້ມແບບຮຽນວິຊາພາສາລາວ ຊັ້ນ ປ.5 (ສະບັບປີ 2023)

- ການເລືອກກຸ່ມຕົວຢ່າງ: ຜູ້ຄົ້ນຄວ້າໄດ້ໃຊ້ ວິທີການເລືອກແບບເຈາະຈົງ (Purposive Sampling) ໂດຍຕັ້ງເກນໃນການຄັດເລືອກດັ່ງນີ້: ຕ້ອງເປັນບົດອ່ານຫຼັກຂອງບົດຮຽນ (ບໍ່ລວມບົດອ່ານເສີມທີ່ບໍ່ມີຄຳຖາມ), ບົດອ່ານນັ້ນ ຕ້ອງມີຄຳຖາມທ້າຍບົດຄົບຖ້ວນ.

- ກຸ່ມຕົວຢ່າງ:ຈາກການກວດສອບຕາມເກນ, ໄດ້ກຸ່ມຕົວຢ່າງສຳລັບການວິເຄາະດັ່ງນີ້:ບົດອ່ານ:ຈຳນວນທັງໝົດ 28 ບົດ, ຄຳຖາມທ້າຍບົດ: ຈຳນວນທັງໝົດ 98 ຄຳຖາມເຊັ່ນ: ຊັ້ນ ປ.3: ບົດອ່ານ 18 ບົດ, ຄຳຖາມ 58 ຂໍ້,ຊັ້ນ ປ.4: ບົດອ່ານ 4 ບົດ, ຄຳຖາມ 17 ຂໍ້ ແລະຊັ້ນ ປ.5: ບົດອ່ານ 6 ບົດ, ຄຳຖາມ 23 ຂໍ້

ຕາຕະລາງ: ສະຫຼຸບກຸ່ມຕົວຢ່າງ

| ຊັ້ນຮຽນ | ຈຳນວນບົດອ່ານ (ບົດ) | ຈຳນວນຄຳຖາມ (ຂໍ້) |
|---|---|---|
| ປ.3 | 18 | 58 |
| ປ.4 | 4 | 17 |
| ປ.5 | 6 | 23 |
| **ລວມ** | **28** | **98** |

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືຫຼັກທີ່ໃຊ້ໃນການເກັບກຳ ແລະ ວິເຄາະຂໍ້ມູນແມ່ນ ແບບບັນທຶກການວິເຄາະຄຳຖາມ (Question Analysis Record Form) ທີ່ຜູ້ຄົ້ນຄວ້າສ້າງຂຶ້ນ. ເຄື່ອງມືນີ້ຖືກອອກແບບ

ໃນຮູບແບບຕາຕະລາງເພື່ອບັນທຶກຜົນການວິເຄາະຄຳຖາມແຕ່ລະຂໍ້ຢ່າງເປັນລະບົບ.

ຂັ້ນຕອນການສ້າງ ແລະ ກວດສອບຄຸນນະພາບເຄື່ອງມື:

1. ສຶກສາທິດສະດີ: ຜູ້ຄົ້ນຄວ້າໄດ້ສຶກສາແນວຄິດຫຼັກຂອງ Bloom's Taxonomy (ສະບັບປັບປຸງ) ແລະ ທິດສະດີ QAR ຢ່າງເລິກເຊິ່ງ.

2. ສັງເຄາະອົງປະກອບ: ນຳເອົາແນວຄິດຫຼັກຈາກທັງສອງທິດສະດີ ມາສັງເຄາະເປັນອົງປະກອບທີ່ຈະຕ້ອງວິເຄາະໃນຄຳຖາມແຕ່ລະຂໍ້.

3. ອອກແບບໂຄງສ້າງ: ສ້າງເປັນຕາຕະລາງບັນທຶກທີ່ມີຫ້ອງຕ່າງໆຄົບຖ້ວນ, ປະກອບດ້ວຍ: ລຳດັບ ແລະ ເນື້ອໃນຄຳຖາມ, ການວິເຄາະລະດັບຄວາມຄິດ (Bloom's), ການວິເຄາະຄວາມສຳພັນ (QAR), ແລະ ການປະເມີນຄວາມສອດຄ່ອງ 3 ລະດັບ ພ້ອມຫ້ອງບັນທຶກເຫດຜົນປະກອບ.

4. ກວດສອບຄຸນນະພາບ (Validation): ເພື່ອໃຫ້ເກນການປະເມີນມີຄວາມໜ້າເຊື່ອຖື, ຜູ້ຄົ້ນຄວ້າໄດ້ນຳຮ່າງເຄື່ອງມື ແລະ ເກນການໃຫ້ຄະແນນຄວາມສອດຄ່ອງ ໄປໃຫ້ອາຈານທີ່ປຶກສາກວດຄວາມຊັດເຈນຂອງພາສາ ແລະ ຄວາມຄອບຄຸມຂອງເນື້ອໃນຈາກນັ້ນໄດ້ນຳຄຳແນະນຳມາປັບປຸງແກ້ໄຂຈົນໄດ້ເຄື່ອງມືສະບັບສົມບູນ.

### *3.3 ວິທີເກັບກຳຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳ ແລະ ວິເຄາະຂໍ້ມູນຢ່າງເປັນລະບົບ ເພື່ອໃຫ້ເຫັນພາບທີ່ຊັດເຈນ ດັ່ງຂັ້ນຕອນຕໍ່ໄປນີ້:

- ຂັ້ນຕອນທີ 1: ການເກັບກຳຂໍ້ມູນ (Data Collection):

1. ກຳນົດເອກະສານເປົ້າໝາຍ: ຮອບຮວມປຶ້ມແບບຮຽນວິຊາພາສາລາວ ຊັ້ນ ປ.3 (2021), ປ.4 (2022), ແລະ ປ.5 (2023).

2. ຄັດເລືອກກຸ່ມຕົວຢ່າງ: ດຳເນີນການຄັດເລືອກບົດອ່ານ ແລະ ຄຳຖາມທ້າຍບົດຕາມເກນທີ່ຕັ້ງໄວ້ (ເປັນບົດອ່ານຫຼັກ ແລະ ມີຄຳຖາມຄົບຖ້ວນ) ໄດ້ກຸ່ມຕົວຢ່າງເປັນບົດອ່ານ 28 ບົດ ແລະ ຄຳຖາມ 98 ຂໍ້.

3. ບັນທຶກຂໍ້ມູນດິບ: ນຳຄຳຖາມທັງ 98 ຂໍ້ ພ້ອມທັງຊື່ບົດ ແລະ ຊັ້ນຮຽນ ມາບັນທຶກລົງໃນແບບບັນທຶກການວິເຄາະທີ່ກຽມໄວ້.

### *3.4 ການວິເຄາະຂໍ້ມູນ*

1.ອ່ານເພື່ອທຳຄວາມເຂົ້າໃຈ: ຜູ້ຄົ້ນຄວ້າອ່ານບົດອ່ານແຕ່ລະບົດ ແລະ ຄຳຖາມທ້າຍບົດທີ່ຕິດພັນກັນຢ່າງລະອຽດ ເພື່ອໃຫ້ເຂົ້າໃຈເນື້ອໃນ, ຈຸດປະສົງ ແລະ ຂໍ້ຄິດຫຼັກຂອງບົດອ່ານນັ້ນໆ.

2.ວິເຄາະຄາຖາມລາຍຂໍ້: ນຳຄຳຖາມແຕ່ລະຂໍ້ (ລວມ 98 ຂໍ້) ມາຜ່ານຂະບວນການວິເຄາະ 3 ຂັ້ນຕອນຍ່ອຍ:

- ວິເຄາະຕາມ Bloom's Taxonomy: ພິຈາລະນາວ່າຄຳຖາມນັ້ນວັດແທກຄວາມຄິດລະດັບໃດ (ຈື່ຈຳ, ເຂົ້າໃຈ, ນຳໃຊ້, ວິເຄາະ, ປະເມີນຄ່າ, ຫຼື ສ້າງສັນ) ແລ້ວໝາຍຖືກໃສ່ໃນແບບບັນທຶກ.

- ວິເຄາະຕາມ QAR: ພິຈາລະນາວ່າແຫຼ່ງທີ່ມາຂອງຄຳຕອບແມ່ນມາຈາກໃສ (Right There, Think and Search, Author and You, ຫຼື On My Own) ແລ້ວບັນທຶກໄວ້.

- ປະເມີນຄວາມສອດຄ່ອງ: ນຳຜົນການວິເຄາະຂ້າງເທິງມາຕັດສິນ ໂດຍໃຊ້ເກນທີ່ກຳນົດໄວ້ (ຊຶ່ງຜ່ານການກວດສອບແລ້ວ) ແລ້ວໃຫ້ຄະແນນເປັນ3 (ສອດຄ່ອງຫຼາຍ), 2 (ສອດຄ່ອງປານກາງ), ຫຼື 1 (ສອດຄ່ອງຕໍ່າ/ບໍ່ສອດຄ່ອງ) ພ້ອມທັງຂຽນເຫດຜົນປະກອບການຕັດສິນໃຈສັ້ນໆ.

**ເກນການປະເມີນຄວາມສອດຄ່ອງຂອງຄຳຖາມທ້າຍບົດ (Rubric )**ເກນການປະເມີນນີ້ຖືກສ້າງຂຶ້ນເພື່ອໃຊ້ໃນການວິເຄາະຂໍ້ມູ ໂດຍຈຳແນກລະດັບຄວາມສອດຄ່ອງອອກເປັນ 3 ລະດັບຄະແນນ ດັ່ງນີ້:

| ລະດັບຄະແນນ | ຊື່ລະດັບ | ຄຳອະທິບາຍເກນການໃຫ້ຄະແນນ |
|---|---|---|
| 3 | ສອດຄ່ອງຫຼາຍ | • ຄຳຖາມ ແລະ ຄຳຕອບມີຄວາມສຳພັນໂດຍກົງກັບເນື້ອໃນໃຈຄວາມຫຼັກ, ຂໍ້ຄິດ ຫຼື ຂໍ້ມູນສຳຄັນທີ່ປາກົດໃນບົດອ່ານ..<br>• ການຕອບຄຳຖາມສາມາດວັດແທກຄວາມເຂົ້າໃຈຂອງນັກຮຽນຕໍ່ບົດອ່ານໄດ້ຢ່າງຊັດເຈນ.<br>• ຄຳຕອບສາມາດຊອກຫາໄດ້ຈາກບົດອ່ານໂດຍກົງ ຫຼື ຜ່ານການຄິດວິເຄາະເຊື່ອມໂຍງຂໍ້ມູນໃນບົດ. |
| 2 | ສອດຄ່ອງປານກາງ | • ຄຳຖາມມີຄວາມກ່ຽວຂ້ອງກັບເນື້ອໃນບົດອ່ານແຕ່ຈະຖາມກ່ຽວກັບຈຸດທີ່ເປັນລາຍລະອຽດຍ່ອຍ, ບໍ່ແມ່ນໃຈຄວາມຫຼັກ. |

| | | |
|---|---|---|
| | | • ຄຳຖາມ ມີການໃຊ້ຄຳສັບທີ່ຄຸມເຄືອເລັກນ້ອຍ ແຕ່ຍັງສາມາດຕີຄວາມ ແລະ ຫາຄຳຕອບທີ່ກ່ຽວຂ້ອງຈາກບົດອ່ານໄດ້. |
| 1 | **ບໍ່ສອດຄ່ອງ** | • ຄຳຖາມບໍ່ສາມາດຕອບໄດ້ໂດຍອີງໃສ່ຂໍ້ມູນຈາກບົດອ່ານ (ຖາມໃນສິ່ງທີ່ບໍ່ມີຢູ່ໃນບົດ).<br>• ຄຳຖາມມີຂໍ້ຜິດພາດດ້ານເຕັກນິກຢ່າງຊັດເຈນ ເຊັ່ນ: ໃຊ້ຄຳສັບຜິດປະເພດຂອງບົດອ່ານ.<br>• ຄຳຖາມບໍ່ກ່ຽວຂ້ອງກັບຈຸດປະສົງຫຼັກຂອງບົດອ່ານເລີຍ. |

**ສັງລວມຜົນ:** ເມື່ອວິເຄາະຄົບທັງ 98 ຂໍ້ແລ້ວ, ໄດ້ນຳເອົາຄະແນນຄວາມສອດຄ່ອງທັງໝົດມາສັງລວມເປັນຄ່າຄວາມຖີ່ ແລະ ຄິດໄລ່ເປັນສ່ວນຮ້ອຍ, ແລ້ວນຳສະເໜີໃນຮູບແບບຕາຕະລາງສະຫຼຸບປະກອບຄຳອະທິບາຍແບບພັນລະນາ.

## 4. ຜົນການຄົ້ນຄວ້າ

ໃນພາກນີ້, ຜູ້ຄົ້ນຄວ້າຈະນຳສະເໜີຜົນການວິເຄາະຄວາມສອດຄ່ອງຂອງຄຳຖາມທ້າຍບົດກັບເນື້ອໃນຂອງບົດອ່ານໃນຮູບແບບສະຫຼຸບ, ພ້ອມທັງອະພິປາຍຜົນທີ່ຄົ້ນພົບຢ່າງລະອຽດ.

### *4. 1 ຜົນການວິເຄາະຄວາມສອດຄ່ອງຂອງຄຳຖາມ ຊັ້ນປະຖົມສຶກສາປີທີ 3*

ຕາຕະລາງ 2: ລະດັບຄວາມສອດຄ່ອງຂອງຄຳຖາມ ຊັ້ນ ປ.3 (n=58)

| **ລະດັບຄວາມສອດຄ່ອງ** | **ຈຳນວນ (ຂໍ້)** | **ເປີເຊັນ (%)** |
|---|---|---|
| ຄະແນນ 3 (ສອດຄ່ອງຫຼາຍ) | 52 | 89.7 |
| ຄະແນນ 2 (ສອດຄ່ອງປານກາງ) | 6 | 10.3 |
| ຄະແນນ 1 (ບໍ່ສອດຄ່ອງ) | 0 | 0.0 |
| ລວມ | 58 | 100.0 |

ຈາກຕາຕະລາງທີ 2, ພົບວ່າຄຳຖາມມີຄວາມສອດຄ່ອງກັບເນື້ອໃນຢູ່ໃນ ລະດັບສູງຫຼາຍ. ຄຳຖາມສ່ວນໃຫຍ່ເຖິງ 89.7% ຈັດຢູ່ໃນລະດັບສອດຄ່ອງຫຼາຍ, ເຊິ່ງເນັ້ນໃສ່ການຖາມຫົວຂໍ້ຫຼັກ, ໃຈຄວາມສຳຄັນ, ແລະ ເຫດຜົນຂອງຕົວລະຄອນ. ສ່ວນຄຳຖາມທີ່ສອດຄ່ອງປານກາງ (10.3%) ມັກເປັນການຖາມລາຍລະອຽດຍ່ອຍໃນບົດ. ທີ່ໜ້າສົນໃຈຄື ບໍ່ພົບຄຳຖາມທີ່ບໍ່ສອດຄ່ອງເລີຍໃນຊັ້ນຮຽນນີ້, ເຊິ່ງສະແດງໃຫ້ເຫັນວ່າແບບຮຽນ ປ.3 ມີພື້ນຖານທີ່ດີໃນການອອກແບບຄຳຖາມເພື່ອວັດແທກຄວາມເຂົ້າໃຈ.

### *4.2 ຜົນການວິເຄາະຄວາມສອດຄ່ອງຂອງຄຳຖາມ ຊັ້ນປະຖົມສຶກສາປີທີ 4*

ຕາຕະລາງ 3: ລະດັບຄວາມສອດຄ່ອງຂອງຄຳຖາມ ຊັ້ນ ປ.4 (n=17)

| **ລະດັບຄວາມສອດຄ່ອງ** | **ຈຳນວນ (ຂໍ້)** | **ເປີເຊັນ (%)** |
|---|---|---|
| ຄະແນນ 3 (ສອດຄ່ອງຫຼາຍ) | 12 | 70.6 |
| ຄະແນນ 2 (ສອດຄ່ອງປານກາງ) | 3 | 17.6 |
| ຄະແນນ 1 (ບໍ່ສອດຄ່ອງ) | 2 | 11.8 |
| ລວມ | 17 | 100.0 |

ຈາກຕາຕະລາງທີ 3 ຈາກຄຳຖາມທັງໝົດ 17 ຂໍ້, ຄວາມສອດຄ່ອງໂດຍລວມຍັງຢູ່ໃນ ລະດັບດີ, ໂດຍມີຄຳຖາມທີ່ສອດຄ່ອງຫຼາຍຢູ່ທີ່ 70.6%. ແນວໃດກໍຕາມ, ຊັ້ນ ປ.4 ເປັນຊັ້ນຮຽນດຽວທີ່ພົບຄຳຖາມທີ່ບໍ່ສອດຄ່ອງ (ຄະແນນ 1) ຈຳນວນ 2 ຂໍ້ (11.8%). ສາເຫດຂອງຄວາມບໍ່ສອດຄ່ອງນີ້ເກີດຈາກບັນຫາທາງດ້ານເຕັກນິກ, ຄື: ຂໍ້ 74 ທີ່ຖາມຫາ "ຊື່" ຂອງຕົວລະຄອນ, ທັງທີ່ໃນບົດເລື່ອງ "ຊ້າງ ແລະ ມົດ" ບອກພຽງແຕ່ "ປະເພດ" ຂອງສັດ; ແລະ ຂໍ້ 75 ທີ່ຖາມເຖິງ "ບົດບາດສະເພາະຂອງຜູ້ເລົ່າ", ເຊິ່ງເປັນແນວຄິດທິດສະດີທີ່ຊັບຊ້ອນ ແລະ ບໍ່ໄດ້ປາກົດຢ່າງຊັດເຈນໃນນິທານ.

### *4.3 ຜົນການວິເຄາະຄວາມສອດຄ່ອງຂອງຄຳຖາມ ຊັ້ນປະຖົມສຶກສາປີທີ 5*

ຕາຕະລາງ 4: ລະດັບຄວາມສອດຄ່ອງຂອງຄຳຖາມ ຊັ້ນ ປ.5 (n=23)

| **ລະດັບຄວາມສອດຄ່ອງ** | **ຈຳນວນ (ຂໍ້)** | **ເປີເຊັນ (%)** |
|---|---|---|
| ຄະແນນ 3 (ສອດຄ່ອງຫຼາຍ) | 21 | 91.3 |
| ຄະແນນ 2 (ສອດຄ່ອງປານກາງ) | 0 | 0.0 |
| ຄະແນນ 1 (ບໍ່ສອດຄ່ອງ) | 2 | 8.7 |

| | | |
|---|---|---|
| ລວມ | 23 | 100.0 |

ຈາກຕາຕະລາງທີ 5: ພົບວ່າຄຳຖາມສ່ວນໃຫຍ່ມີຄວາມສອດຄ່ອງໃນ ລະດັບທີ່ສູງຫຼາຍ (91.3%). ຄຳຖາມໃນຊັ້ນນີ້ມັກຈະຖາມເພື່ອວິເຄາະໂຄງສ້າງເລື່ອງ, ປະເມີນຄ່າ, ແລະ ນຳໄປໃຊ້, ເຊິ່ງເໝາະສົມກັບນັກຮຽນຊັ້ນສູງສຸດຂອງປະຖົມ. ແນວໃດກໍຕາມ, ຍັງພົບຄຳຖາມທີ່ ບໍ່ສອດຄ່ອງ 2 ຂໍ້ (8.7%) ເຊິ່ງມີສາເຫດຄ້າຍຄືກັບຊັ້ນ ປ.4. ຄື: ຂໍ້ 95 ແລະ 96 ທີ່ຖາມກ່ຽວກັບ "ບົດນິທານ", ທັງທີ່ບົດອ່ານ "ທົ່ງໄຫຫີນ" ເປັນບົດສາລະຄະດີ, ເຊິ່ງອາດສ້າງຄວາມສັບສົນໃຫ້ນັກຮຽນກ່ຽວກັບປະເພດຂອງບົດອ່ານ.

ສະຫຼຸບພາບລວມ: ຜົນການວິເຄາະສະແດງໃຫ້ເຫັນຢ່າງຊັດເຈນວ່າ ຄຳຖາມທ້າຍບົດໃນແບບຮຽນວິຊາພາສາລາວຊັ້ນປະຖົມສຶກສາ (ປ.3-ປ.5) ມີຄວາມສອດຄ່ອງກັບເນື້ອໃນບົດອ່ານຢູ່ໃນ ລະດັບສູງຫຼາຍ. ຄຳຖາມສ່ວນຫຼາຍ(86.7%) ໄດ້ຄະແນນ 3 (ສອດຄ່ອງຫຼາຍ), ເຊິ່ງໝາຍຄວາມວ່າຄຳຖາມເຫຼົ່ານັ້ນສາມາດເຮັດໜ້າທີ່ໃນການວັດແທກ ແລະ ທົບທວນຄວາມເຂົ້າໃຈຂອງນັກຮຽນຕໍ່ກັບໃຈຄວາມຫຼັກ, ເຫດຜົນ, ແລະ ຂໍ້ຄິດສຳຄັນຂອງບົດອ່ານໄດ້ຢ່າງມີປະສິດທິພາບ. ມີພຽງສ່ວນນ້ອຍ (9.2%) ທີ່ມີຄວາມສອດຄ່ອງໃນລະດັບປານກາງ, ແລະມີພຽງ 4 ຂໍ້ (4.1%) ເທົ່ານັ້ນທີ່ຖືກຈັດວ່າບໍ່ສອດຄ່ອງ

ສາເຫດຫຼັກຂອງຄວາມບໍ່ສອດຄ່ອງ (ຄະແນນ 1) ທີ່ພົບເຫັນໃນ 4 ຂໍ້ (ຂໍ້ 74, 75, 95, 96) ມາຈາກບັນຫາທາງດ້ານເຕັກນິກໃນການຕັ້ງຄຳຖາມ ເຊັ່ນ: ການໃຊ້ຄຳສັບຜິດປະເພດຂອງບົດອ່ານ (ຖາມເລື່ອງ "ນິທານ" ໃນບົດ "ສາລະຄະດີ") ຫຼື ການຖາມຫາຂໍ້ມູນທີ່ບໍ່ໄດ້ລະບຸໄວ້ໃນບົດອ່ານ (ຖາມຫາ "ຊື່" ຕົວລະຄອນ ແທນທີ່ຈະແມ່ນ "ປະເພດ" ຕົວລະຄອນ), ເຊິ່ງຊີ້ໃຫ້ເຫັນຈຸດທີ່ສາມາດປັບປຸງແກ້ໄຂໃຫ້ແບບຮຽນມີຄວາມສົມບູນຍິ່ງຂຶ້ນ.

## 5. ອະພິປາຍຜົນ

ຈາກຜົນການວິເຄາະທີ່ພົບວ່າ ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດ ແລະ ເນື້ອໃນບົດອ່ານຢູ່ໃນລະດັບສູງຫຼາຍ (88.8%), ສາມາດນຳມາອະພິປາຍຜົນໃນບັນຫາຕ່າງໆ ທີ່ມີຄວາມໝາຍຕໍ່ວົງການສຶກສາໄດ້ດັ່ງນີ້:

ຜົນການຄົ້ນຄວ້ານີ້ເປັນການຢືນຢັນເຖິງຄຸນນະພາບ ແລະ ປັດຊະຍາການອອກແບບຂອງແບບຮຽນຊຸດປັບປຸງໃໝ່. ຕົວເລກຄວາມສອດຄ່ອງທີ່ສູງບໍ່ແມ່ນເລື່ອງບັງເອີນ, ແຕ່ມັນສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈຂອງຄະນະພັດທະນາຫຼັກສູດ ແລະ ຜູ້ຂຽນແບບຮຽນທີ່ໄດ້ອອກແບບບົດອ່ານ ແລະ ຄຳຖາມໃຫ້ສົ່ງເສີມເຊິ່ງກັນແລະກັນ. ຄຳຖາມສ່ວນໃຫຍ່ບໍ່ໄດ້ຢຸດຢູ່ແຄ່ການທົດສອບຄວາມຈຳ (ລະດັບ Remembering ຂອງ Bloom), ແຕ່ ເນັ້ນໄປຫາການກວດສອບຄວາມເຂົ້າໃຈ (Understanding), ການຊອກຫາເຫດຜົນ, ແລະ ການສະຫຼຸບຂໍ້ຄິດຈາກເລື່ອງ. ນີ້ສະແດງໃຫ້ເຫັນວ່າແບບຮຽນໄດ້ຖືກອອກແບບມາເພື່ອເປັນເຄື່ອງມືໃນການ "ສອນ" ໃຫ້ນັກຮຽນຄິດ ບໍ່ແມ່ນພຽງແຕ່ "ທົດສອບ" ຄວາມຈື່ຈຳ. ສ່ວນຂໍ້ທີ່ບໍ່ສອດຄ່ອງເຊິ່ງມີຈຳນວນໜ້ອຍຫຼາຍ (4.1%) ແລະ ເກີດຈາກບັນຫາດ້ານເຕັກນິກ, ກໍເປັນຂໍ້ມູນທີ່ລ້ຳຄ່າ ເພາະມັນຊີ້ໃຫ້ເຫັນຈຸດອ່ອນທີ່ສາມາດແກ້ໄຂໄດ້ງ່າຍໃນການພິມຄັ້ງຕໍ່ໄປ ເພື່ອເຮັດໃຫ້ແບບຮຽນມີຄວາມສົມບູນແບບເກືອບ 100%.

ຜົນການຄົ້ນຄວ້ານີ້ສອດຄ່ອງຢ່າງຍິ່ງກັບແນວຄິດທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ. ຜົນການຄົ້ນຄວ້າໄດ້ສະໜັບສະໜູນແນວຄິດຂອງ Frase (1968) ຢ່າງຊັດເຈນທີ່ວ່າປະສິດທິພາບຂອງຄຳຖາມຂຶ້ນຢູ່ກັບຄວາມສອດຄ່ອງລະຫວ່າງຄຳຖາມ ແລະ ເນື້ອໃນ. ເມື່ອຄຳຖາມຖາມຖືກຈຸດທີ່ເນື້ອໃນຕ້ອງການເນັ້ນ, ມັນຈະຊ່ວຍຊີ້ທິດທາງການຮຽນຮູ້ຂອງນັກຮຽນໄດ້ຢ່າງມີປະສິດທິພາບ. ນອກຈາກນັ້ນ, ເມື່ອວິເຄາະຜ່ານທິດສະດີ QAR, ພົບວ່າຄຳຖາມສ່ວນໃຫຍ່ຕົກຢູ່ໃນປະເພດ "In the Book" (Right There, Think and Search) ແລະ "Author and You", ເຊິ່ງເປັນການສະໜັບສະໜູນການຄົ້ນຄວ້າຂອງ Kinniburgh & Prew (2010) ທີ່ພົບວ່າການວາງພື້ນຖານໃຫ້ນັກຮຽນສາມາດຊອກຫາ ແລະ ຕີຄວາມຄຳຕອບຈາກບົດອ່ານໄດ້ ເປັນສິ່ງສຳຄັນທີ່ສຸດໃນການສ້າງຄວາມເຂົ້າໃຈໃນການອ່ານໃຫ້ແກ່ນັກຮຽນຊັ້ນປະຖົມ. ຜົນການຄົ້ນຄວ້ານີ້ຈຶ່ງເປັນການຢືນຢັນໃນທາງປະຕິບັດວ່າ ແບບຮຽນລາວໄດ້ນຳຫຼັກການທີ່ເປັນສາກົນເຫຼົ່ານີ້ມາປັບໃຊ້ຢ່າງໄດ້ຜົນດີ.

ຜົນການຄົ້ນຄວ້າມີຄວາມໝາຍ ແລະ ສຳຄັນຢ່າງຍິ່ງຕໍ່ການຈັດການຮຽນ-ການສອນໃນຫ້ອງຮຽນຕົວຈິງ. ຄວາມສອດຄ່ອງໃນລະດັບສູງນີ້ ສ້າງປະໂຫຍດຫຼາຍດ້ານ:

ດ້ານຄວາມທ່ຽງກົງຂອງການວັດປະເມີນຜົນ: ຄູສາມາດໝັ້ນໃຈໄດ້ວ່າຄະແນນທີ່ນັກຮຽນໄດ້ຮັບຈາກການຕອບຄຳຖາມທ້າຍບົດ ແມ່ນສະທ້ອນເຖິງຄວາມເຂົ້າໃຈໃນບົດຮຽນທີ່ໄດ້ສອນຢ່າງແທ້ຈິງ, ເຮັດໃຫ້ການປະເມີນຜົນມີຄວາມຍຸຕິທຳ.

ດ້ານການສົ່ງເສີມການຮຽນຮູ້: ຄຳຖາມທີ່ສອດຄ່ອງທຳໜ້າທີ່ເປັນ "ຂົວຕໍ່" ເຊື່ອມຕໍ່ລະຫວ່າງການອ່ານຂອງນັກຮຽນກັບຄວາມເຂົ້າໃຈທີ່ເລິກເຊິ່ງ.ເຊິ່ງກະຕຸ້ນໃຫ້ນັກຮຽນຕ້ອງກັບໄປອ່ານທົບທວນ, ຄົ້ນຫາຄວາມສຳພັນລະຫວ່າງເຫດຜົນ ແລະ ສະຫຼຸບຂໍ້ຄິດ ເຊິ່ງເປັນຂະບວນການທີ່ຊ່ວຍຢ້ຳຄືນການຮຽນຮູ້ໃຫ້ເລິກເຊິ່ງ.

ດ້ານການເປັນເຄື່ອງມືທີ່ມີປະສິດທິພາບສຳລັບຄູ: ຄູສາມາດນຳໃຊ້ຄຳຖາມໃນແບບຮຽນເປັນຈຸດເລີ່ມຕົ້ນ ແລະ ເປັນແບບຢ່າງໃນການພັດທະນາຄຳຖາມເສີມຂອງຕົນເອງ ເພື່ອສົ່ງເສີມທັກສະການຄິດຂັ້ນສູງຂຶ້ນໄປອີກ.

ໂດຍສະຫລຸບ, ຜົນການຄົ້ນຄວ້າໄດ້ໃຫ້ຂໍ້ສະຫຼຸບທີ່ໜັກແໜ້ນວ່າ ແບບຮຽນພາສາລາວຊັ້ນປະຖົມສຶກສານີ້ ບໍ່ແມ່ນເປັນພຽງໜັງສືອ່ານ ແຕ່ເປັນເຄື່ອງມືການສອນທີ່ມີຄຸນນະພາບສູງ, ມີ

ການອອກແບບຢ່າງເປັນລະບົບ ແລະມີສ່ວນສຳຄັນໃນການສ້າງພື້ນຖານການອ່ານຈັບໃຈຄວາມທີ່ເຂັ້ມແຂງໃຫ້ແກ່ນັກຮຽນລາວ.

## 6. ສະຫຼຸບຜົນ

ການຄົ້ນຄວ້າເລື່ອງ "ຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດກັບເນື້ອໃນບົດອ່ານໃນແບບຮຽນພາສາລາວຊັ້ນປະຖົມສຶກສາ" ມີຈຸດປະສົງຫຼັກເພື່ອວິເຄາະລະດັບຄວາມສອດຄ່ອງລະຫວ່າງສອງອົງປະກອບດັ່ງກ່າວ. ຈາກການດຳເນີນການຄົ້ນຄວ້າຢ່າງເປັນລະບົບ, ຜູ້ຄົ້ນຄວ້າສາມາດສະຫຼຸບຜົນ, ຊີ້ແຈງຂໍ້ຈຳກັດ, ແລະ ໃຫ້ຂໍ້ສະເໜີແນະດັ່ງລາຍລະອຽດລຸ່ມນີ້.

ຜົນການວິເຄາະຄວາມສອດຄ່ອງລະຫວ່າງຄຳຖາມທ້າຍບົດ 98 ຂໍ້ ແລະ ເນື້ອໃນບົດອ່ານ 28 ບົດ ໃນແບບຮຽນຊັ້ນ ປ.3-ປ.5 ສະຫຼຸບໄດ້ວ່າ: ຄຳຖາມສ່ວນໃຫຍ່ມີຄວາມສອດຄ່ອງກັບເນື້ອໃນໃນລະດັບທີ່ສູງຫຼາຍ, ເຊິ່ງເປັນປັດໄຈສຳຄັນທີ່ເຮັດໃຫ້ການວັດຜົນການຮຽນຮູ້ມີປະສິດທິພາບ.

ລະດັບຄວາມສອດຄ່ອງໂດຍລວມ: ຈາກຄຳຖາມທັງໝົດ 98 ຂໍ້, 87 ຂໍ້ (88.8%) ມີຄວາມສອດຄ່ອງໃນລະດັບຫຼາຍ, 7 ຂໍ້ (7.1%) ມີຄວາມສອດຄ່ອງປານກາງ ແລະ ມີພຽງ 4 ຂໍ້ (4.1%) ທີ່ມີຄວາມສອດຄ່ອງຕ່ຳ ຫຼື ບໍ່ສອດຄ່ອງ. ຜົນການວິເຄາະນີ້ສະແດງໃຫ້ເຫັນວ່າ ຄຳຖາມທ້າຍບົດສ່ວນໃຫຍ່ສາມາດເຮັດໜ້າທີ່ໃນການວັດຄວາມເຂົ້າໃຈຂອງນັກຮຽນຕໍ່ກັບໃຈຄວາມຫຼັກ, ລາຍລະອຽດທີ່ສຳຄັນ ແລະ ຈຸດປະສົງຂອງບົດອ່ານໄດ້ຢ່າງມີປະສິດທິພາບ.

ສາເຫດຂອງຄວາມບໍ່ສອດຄ່ອງ: ສຳລັບຄຳຖາມຈຳນວນໜ້ອຍ (4 ຂໍ້) ທີ່ມີຄວາມສອດຄ່ອງຕ່ຳ, ສາເຫດຫຼັກບໍ່ໄດ້ມາຈາກການຖາມນອກເລື່ອງ ແຕ່ມັກເກີດຈາກບັນຫາທາງດ້ານເຕັກນິກຂອງການອອກແບບຄຳຖາມ ເຊັ່ນ: ການໃຊ້ຄຳສັບບອກປະເພດບົດຜິດພາດ (ເອີ້ນບົດສາລະຄະດີວ່າ "ນິທານ") ຫຼື ການຖາມຫາຂໍ້ມູນທີ່ບໍ່ມີໃນບົດ (ຖາມຫາ "ຊື່" ຂອງຕົວລະຄອນແທນທີ່ຈະແມ່ນ "ປະເພດ" ຂອງຕົວລະຄອນ).

ສະຫຼຸບລວມແລ້ວ, ຜົນການຄົ້ນຄວ້າຄັ້ງນີ້ຢືນຢັນໄດ້ວ່າແບບຮຽນວິຊາພາສາລາວຊັ້ນປະຖົມສຶກສາ (ປ.3-ປ.5) ສະບັບປັບປຸງໃໝ່ ມີການອອກແບບທີ່ເປັນລະບົບ ແລະ ມີຄວາມສຳພັນທີ່ແໜ້ນແຟ້ນລະຫວ່າງເນື້ອໃນບົດອ່ານ ແລະ ຄຳຖາມທ້າຍບົດທີ່ໃຊ້ໃນການວັດປະເມີນຜົນ. ຈຸດບົກຜ່ອງເລັກນ້ອຍທີ່ພົບເຫັນສາມາດນຳໄປເປັນຂໍ້ມູນເພື່ອປັບປຸງການອອກແບບແບບຮຽນໃນອະນາຄົດໃຫ້ມີຄວາມສົມບູນຍິ່ງຂຶ້ນ.

## 7. ຂໍ້ສະເໜີແນະ

ຈາກຜົນການຄົ້ນຄວ້າ ແລະ ການອະພິປາຍຜົນທັງໝົດ, ຜູ້ຄົ້ນຄວ້າຂໍສະເໜີແນະທີ່ສາມາດນຳໄປປະຕິບັດໄດ້ຈິງ ໂດຍແບ່ງຕາມກຸ່ມເປົ້າໝາຍດັ່ງນີ້:

1. ຂໍ້ສະເໜີແນະທາງນະໂຍບາຍ (ສຳລັບກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ):

- ຄວນຮັກສາມາດຕະຖານການອອກແບບບົດອ່ານ ແລະ ຄຳຖາມທີ່ມີຄວາມສອດຄ່ອງສູງນີ້ໄວ້ ແລະ ພິຈາລະນານຳໃຊ້ເປັນກອບແນວທາງໃນການພັດທະນາແບບຮຽນໃນວິຊາອື່ນໆ ແລະ ຊັ້ນຮຽນຕໍ່ໄປ.

2. ຂໍ້ສະເໜີແນະທາງປະຕິບັດ (ສຳລັບຜູ້ພັດທະນາຫຼັກສູດ, ຜູ້ຂຽນແບບຮຽນ ແລະ ຄູ-ອາຈານ):

- ການປັບປຸງຄຳຖາມທີ່ບໍ່ສອດຄ່ອງ: ໃນການພິມຄັ້ງຕໍ່ໄປ, ຄວນມີການປັບປຸງແກ້ໄຂຄຳຖາມ 4 ຂໍ້ (ຂໍ້ 74, 75, 95, 96) ທີ່ຄົ້ນພົບວ່າບໍ່ສອດຄ່ອງ ເພື່ອເຮັດໃຫ້ແບບຮຽນມີຄວາມສົມບູນແບບຍິ່ງຂຶ້ນ.
- ການພັດທະນາຄູ: ຄວນຈັດການຝຶກອົບຮົມໃຫ້ແກ່ຄູສອນກ່ຽວກັບການນຳໃຊ້ທິດສະດີຂອງ ບລູມ ແລະ QAR ເພື່ອໃຫ້ຄູສາມາດວິເຄາະຄຳຖາມໃນແບບຮຽນໄດ້ ແລະ ສາມາດອອກແບບຄຳຖາມເສີມທີ່ມີຄຸນນະພາບໄດ້ດ້ວຍຕົນເອງ ເພື່ອສົ່ງເສີມການຄິດຂອງນັກຮຽນໃນຫ້ອງຮຽນ.

3. ຂໍ້ສະເໜີແນະເພື່ອການຄົ້ນຄວ້າໃນອະນາຄົດ:

- ຄວນມີການຄົ້ນຄວ້າຕໍ່ຍອດ ເພື່ອສຳຫຼວດວ່າ ການນຳໃຊ້ບົດອ່ານ ແລະ ຄຳຖາມເຫຼົ່ານີ້ໃນຫ້ອງຮຽນຕົວຈິງ ສົ່ງຜົນຕໍ່ທັກສະການຄິດ ແລະ ຜົນສຳເລັດທາງການຮຽນຂອງນັກຮຽນໄດ້ຫຼາຍໜ້ອຍພຽງໃດ.
- ສຶກສາປຽບທຽບຄຸນນະພາບຂອງຄຳຖາມໃນແບບຮຽນວິຊາພາສາລາວກັບແບບຮຽນຂອງປະເທດອື່ນໆໃນພາກພື້ນ ເພື່ອແລກປ່ຽນຮຽນຮູ້ ແລະ ຊອກຫາແນວທາງການພັດທະນາຫຼັກສູດທີ່ດີທີ່ສຸດ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

ເຖິງວ່າການຄົ້ນຄວ້າຈະດຳເນີນໄປຢ່າງເປັນລະບົບ, ແຕ່ກໍຍັງມີຂໍ້ຈຳກັດບາງປະການທີ່ຄວນພິຈາລະນາ ເພື່ອຄວາມເຂົ້າໃຈທີ່ຄົບຖ້ວນຕໍ່ຜົນການວິໄຈ:

ຂອບເຂດຂອງການຄົ້ນຄວ້າ: ການຄົ້ນຄວ້າຄັ້ງນີ້ເປັນການວິເຄາະຈາກເອກະສານ (Document Analysis) ເທົ່ານັ້ນ. ຍັງບໍ່ໄດ້ລວມເຖິງການສຶກສາໃນພາກສະໜາມ ເຊັ່ນ: ການສັງເກດການນຳໃຊ້ຄຳຖາມໃນຫ້ອງຮຽນຕົວຈິງ ຫຼື ການສຳພາດຄວາມຄິດເຫັນຂອງຄູ ແລະ ນັກຮຽນຕໍ່ກັບຄຳຖາມເຫຼົ່ານັ້ນ. ດັ່ງນັ້ນ, ຜົນການວິໄຈຈຶ່ງສະທ້ອນເຖິງ "ຄຸນນະພາບຕາມການອອກແບບ" ແຕ່ອາດຍັງບໍ່ແມ່ນ "ປະສິດທິຜົນໃນການນຳໃຊ້ຈິງ".

## ໙. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ຊື່ເອກະສານກ່ຽວກັບວິໄສທັດການສຶກສາ.* ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2021). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025).* ນະຄອນຫຼວງວຽງຈັນ.

ສຸພັດຕາ ທັງໄຊ. (2547). *ການສຶກສາປະໂຫຍກຄຳຖາມແບບເລືອກຕອບໃນຂໍ້ສອບວິຊາພາສາໄທຂອງ ທະບວງມະຫາວິທະຍາໄລ ພ.ສ. 2541 – 2545.* (ວິທະຍານິພົນປະລິນຍາມະຫາບັນດິດ, ມະຫາວິທະຍາໄລກະເສດສາດ)

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2021). *ແບບຮຽນ ວິຊາ ພາສາລາວ ຊັ້ນປະຖົມສຶກສາ ປີທີ 3.* ໂຮງພິມ ລາວຢູນິພຣິນ ຈຳກັດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2022). *ແບບຮຽນ ວິຊາ ພາສາລາວ ຊັ້ນປະຖົມສຶກສາ ປີທີ 4.* ໂຮງພິມ ລາວຢູນິພຣິນ ຈຳກັດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2023). *ແບບຮຽນ ວິຊາ ພາສາລາວ ຊັ້ນປະຖົມສຶກສາ ປີທີ 5.* ໂຮງພິມ ລາວຢູນິພຣິນ ຈຳກັດ.

Anderson, L. W., & Krathwohl, D. R. (Eds.). (2001). *A taxonomy for learning, teaching, and assessing: A revision of Bloom's Taxonomy of educational objectives*. Longman.

Bellon, J. J. (1992). *Teaching from a Research Knowledge Base: A Development and Renewal Process*. Macmillan.

Frase, L. T. (1968). Effect of question location, pacing, and mode upon retention. *Journal of Educational Psychology, 59*(4), 244–249.

Kinniburgh, L. H., & Prew, S. S. (2010). Question-Answer Relationships in the primary grades: Laying the foundation for reading comprehension. *The Reading Teacher, 63*(8), 684-688.

Raphael, T. E. (1982). Question-answering strategies for children. *The Reading Teacher, 36*(2), 186–190.

Raphael, T. E. (1986). Teaching question-answer relationships, revisited. *The Reading Teacher, 39*(6), 516-522.

Tennent, W. (2015). *Understanding reading comprehension: Processes and practices*. Sage Publications.